ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 229 /ລບ

ນະຄອນຫລວງວຽງຈັນ, ວັນທີ 31.5.2012

# ດຳລັດ

## ແນະນຳປະຕິບັດ ກົດໝາຍວ່າດ້ວຍການປ້ອງກັນພືດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບປັບປຸງເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 9 ທັນວາ 2008;
- ອີງຕາມ ມະຕິກອງປະຊຸມລັດຖະບານ ປະຈຳເດືອນ ພະຈິກ 2012 ສະບັບເລກທີ 10/ລບ, ລົງວັນທີ 23/12/2011;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0764/ກປ ລົງວັນທີ 21 ພຶດສະພາ 2012.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ວາງອອກເພື່ອຜັນຂະຫຍາຍ, ອະທິບາຍ ແລະ ແນະນຳເນື້ອໃນບາງມາດຕາ ຂອງ ກົດໝາຍວ່າດ້ວຍການປ້ອງກັນພືດ ທີ່ເຫັນວ່າ ຈຳເປັນໃຫ້ລະອຽດ, ຈະແຈ້ງ, ມີຄວາມເຂົ້າໃຈຖືກຕ້ອງ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດ ກົດໝາຍດັ່ງກ່າວ ໃຫ້ຖືກຕ້ອງ, ມີປະສິດທິຜົນ ແລະ ອຳນວຍຄວາມສະດວກໃຫ້ແກ່ການຄ້າພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມທີ່ກ່ຽວຂ້ອງ ພ້ອມທັງສອດຄ່ອງກັບສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 2. ການປ້ອງກັນພືດ

ການປ້ອງກັນພືດຕາມຫຼັກວິຊາການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງ ກົດໝາຍວ່າດ້ວຍ ການປ້ອງກັນພືດ ໝາຍເຖິງ ການນຳໃຊ້ມາດຕະການດ້ານສຸຂານາໄມພືດ ເປັນຕົ້ນ ການກວດກາ, ການ

ກັກກັນພືດ, ການກຳນົດເຂດເປົ້າໝາຍການຄວບຄຸມສັດຕູພືດ ແລະ ມາດຕະການວິຊາການອື່ນ ທີ່ສອດຄ່ອງກັບລະບຽບກົດໝາຍ, ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ຍັງມີຄວາມໝາຍດ້ານວິຊາການ ແລະ ເຕັກນິກກ່ຽວກັບວຽກງານປ້ອງກັນພືດ ດັ່ງນີ້:

1. **ສັດຕູພືດຕ້ອງຫ້າມ** ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ໝາຍເຖິງ **ສັດຕູພືດຕ້ອງຄວບຄຸມ** ຊຶ່ງປະກອບດ້ວຍ:
   - **ສັດຕູພືດກັກກັນ** ແມ່ນ ສັດຕູພືດທີ່ອາດສົ່ງຜົນກະທົບທາງດ້ານເສດຖະກິດ ແລະ ສ້າງຄວາມເສຍຫາຍຕໍ່ພືດດັ່ງກ່າວ ຊຶ່ງແມ່ນສັດຕູພືດທີ່ຍັງບໍ່ທັນປະກົດມີ ຫຼື ມີແລ້ວແຕ່ຍັງບໍ່ທັນແຜ່ຂະຫຍາຍເປັນວົງກວ້າງ ແລະ ກຳລັງມີການຄວບຄຸມຢ່າງເປັນທາງການ;
   - **ສັດຕູພືດທີ່ບໍ່ກັກກັນ ແຕ່ຕ້ອງຄວບຄຸມ** ແມ່ນ ສັດຕູພືດທີ່ປາກົດມີໃນພືດ ຊຶ່ງອາດມີຜົນກະທົບທາງດ້ານເສດຖະກິດ ທີ່ບໍ່ສາມາດຍອມຮັບໄດ້ ຕໍ່ເປົ້າໝາຍການນຳໃຊ້ພືດດັ່ງກ່າວ.
2. **ການກັກກັນພືດ** ໝາຍເຖິງ ການຈຳກັດບໍລິເວນຂອງພືດ, ຜະລິດຕະພັນພືດ ຫຼື ວັດຖຸຕ້ອງຄວບຄຸມຢ່າງເປັນທາງການ ເພື່ອເຝົ້າລະວັງ, ກວດກາ, ທົດສອບ, ຄົ້ນຄວ້າ ຫຼື ບຳບັດໃຫ້ມີຄວາມສະອາດ ແລະ ປອດໄພ ເພີ່ມຕື່ມ.
3. **ການກວດກາ** ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປ້ອງກັນພືດ ຍົກເວັ້ນໃນພາກທີ VI ໝວດທີ 2 ໝາຍເຖິງ ການກວດກາທາງດ້ານເຕັກນິກ ພືດ, ຜະລິດຕະພັນພືດ ຫຼື ວັດຖຸຄວບຄຸມ ໂດຍເຈົ້າໜ້າທີ່ປ້ອງກັນພືດ ເພື່ອກຳນົດວ່າ ມີສັດຕູພືດ ຫຼື ບໍ່ ຫຼື ເພື່ອກຳນົດຄວາມສອດຄ່ອງກັບລະບຽບການດ້ານສຸຂານາໄມພືດ.
4. **ມາດຕະການດ້ານສຸຂານາໄມພືດ** ໝາຍເຖິງ ລະບຽບ, ກົດໝາຍ ຫຼື ຂັ້ນຕອນການປະຕິບັດທີ່ເປັນທາງການ ເພື່ອສະກັດກັ້ນການເຂົ້າມາ ຫຼື ການແຜ່ລະບາດຂອງສັດຕູພືດກັກກັນ ຫຼື ເພື່ອຈຳກັດຜົນກະທົບທາງດ້ານເສດຖະກິດ ທີ່ອາດເກີດຂຶ້ນຈາກສັດຕູພືດທີ່ບໍ່ກັກກັນ ແຕ່ຕ້ອງຄວບຄຸມ ຢູ່ ສປປ ລາວ.
5. **ການປະຕິບັດດ້ານສຸຂານາໄມພືດ** ໝາຍເຖິງ ການດຳເນີນງານທີ່ເປັນທາງການ ເຊັ່ນ: ການກວດກາ, ການທົດສອບ, ການເຝົ້າລະວັງ ຫຼື ການບຳບັດ ເພື່ອຈັດຕັ້ງປະຕິບັດມາດຕະການສຸຂານາໄມພືດ.
6. **ໃບຢັ້ງຢືນສຸຂານາໄມພືດ** ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍວ່າດ້ວຍການປ້ອງກັນພືດນັ້ນ ຍັງໝາຍເຖິງ ໃບຢັ້ງຢືນທີ່ສອດຄ່ອງຕາມແບບຮ່າງຢັ້ງຢືນ ຂອງອົງການປ້ອງກັນພືດສາກົນ.
7. **ລະດັບການປ້ອງກັນສຸຂານາໄມພືດທີ່ເໝາະສົມ** ໝາຍເຖິງ ລະດັບການປ້ອງກັນສຸຂານາໄມພືດ ທີ່ອົງການຄຸ້ມຄອງວຽກງານປ້ອງກັນພືດ ເຫັນວ່າ ເໝາະສົມກັບ ສປປ ລາວ ໂດຍມີການກຳນົດ ມາດຕະການສຸຂານາໄມພືດ ເພື່ອສະກັດກັ້ນການເຂົ້າມາ ແລະ ແຜ່ລະບາດ ຂອງສັດຕູພືດກັກກັນ, ຫຼື ເພື່ອຈຳກັດຜົນກະທົບທາງດ້ານເສດຖະກິດ ທີ່ອາດເກີດຂຶ້ນຈາກສັດຕູພືດທີ່ບໍ່ກັກກັນ ແຕ່ຕ້ອງຄວບຄຸມ ຢູ່ ສປປ ລາວ.
8. **ເຂດແຜ່ລະບາດຕ່ຳຂອງສັດຕູພືດ** ໝາຍເຖິງ ພື້ນທີ່ທັງໝົດ ຫຼື ສ່ວນໃດໜຶ່ງຂອງປະເທດ ຫຼື ຫຼາຍປະເທດ ທີ່ອົງການຄຸ້ມຄອງວຽກງານປ້ອງກັນພືດກຳນົດວ່າ ໃນພື້ນທີ່ດັ່ງກ່າວມີສັດຕູພືດໃດໜຶ່ງ ເກີດຂຶ້ນໃນລະດັບຕ່ຳ ແລະ ເປັນພື້ນທີ່ ທີ່ມີການນຳໃຊ້ມາດຕະການເຝົ້າລະວັງ, ຄວບຄຸມ ຫຼືກຳຈັດໃຫ້ໝົດໄປຢ່າງມີປະສິດທິພາບ.